# ບົດທີ 8

# ລາຊະກິດຂອງພະວິນຍານບໍລິສຸດ



*ເຄື່ອງທີ່ມະນຸດປະດິດຂຶ້ນມາ ອາດຈະ ແປກປະຫຼາດຫຼາຍ. ມີເຄື່ອງຄຳນວນ ທີ່ສາມາດຄິດບັນຊີໄວກວ່າຫົວເຮົາຈະ ຄິດຫຼາຍທໍ່. ແຕ່ບໍ່ມີເຄື່ອງໃດ ແລະບໍ່ມີ ມະນຸດຄົນໃດທີ່ຈະປຽບກັບພະວິນຍານໄດ້. ໃນບົດຮຽນທີ 8 ນີ້ ເຮົາຈະຮຽນເລື່ອງ ສິ່ງທີ່ພະວິນຍານກະທຳໄດ້.*

**1** ກ່ອນຈະຮຽນຕໍ່ໃນບົດນີ້ ເຮົາຈະຮຽນຄືນໃນເລື່ອງທີ່ຮຽນຈາກ ບົດທີ 7.
(ໃຫ້ທ່ານຕື່ມຄວາມທີ່ຂາດຕໍ່ໄປນີ້)

ກ. ພະວິນຍານບໍລິສຸດເປັນວິນຍານຂອງ ________________________________ .

ຂ. ພະອົງບໍ່ແມ່ນພຽງແຕ່ພະລັງງານ. ພະອົງເປັນ __________________________ພາບ.

ຄ. ສັນຍາລັກໃດປຽບທຽບການຊຳລະຂອງພະວິນຍານ? ________________________

ງ. ສັນຍາລັກໃດສະແດງເຖິງການຊື່ນໃຈ? ________________________________

ຈ. ອັນໃດປຽບເຖິງອຳນາດຂອງພະວິນຍານ? _______________________________

ສ. ແລະອັນໃດອ້າງເຖິງການປອດໄພ? ___________________________________

*ໃນບົດຮຽນນີ້ເຮົາຈະຮຽນກ່ຽວກັບລາຊະກິດຂອງພະວິນຍານບໍລິສຸດ 9 ປະການ.*

**2** ກ່ອນຈະຮຽນເລື່ອງລາຊະກິດຂອງພະວິນຍານຕໍ່ຄົນທີ່ບໍ່ເຊື່ອ ໃຫ້ອ່ານ ໂຢຮັນ 16:8. ພະອົງຈະໃຫ້ໃຜຮູ້ເລື່ອງຄວາມຜິດບາບ ຄວາມຊອບທຳ ແລະການພິພາກສາ? _________

**3** ທ່ານອາດຈະເຄີຍຮູ້ຈັກຄົນທີ່ອ້າງຕົວວ່າບໍ່ໄດ້ເຮັດບາບ, ເຂົາສຳນຶກຕົວວ່າເປັນຄົນຊອບທຳ. ທີ່ເຮົາຈະຍົກຂໍ້ພະຄຳພີ ທີ່ວ່າ ທຸກຄົນເປັນຄົນບາບກໍຕາມ ແຕ່ເຂົາຍັງຖືວ່າຕົນເອງບໍ່ໄດ້ເຮັດບາບ. ຈິນກວ່າອົງໃດຈະບັນດົນໃຫ້ເຂົາຮູ້ແຈ້ງໃນ ເລື່ອງຄວາມຜິດບາບ? ____________

**4** ໂລກຈຳເປັນຕ້ອງຮັບຮູ້ຫຍັງ ກ່ອນຈະຊອກຫາພະເຢຊູມາເປັນພະຜູ້ຊ່ວຍ? ___________

**5** ຖ້າຮັບຮູ້ເລື່ອງຄວາມບາບມາແລ້ວ ຍັງແຕ່ຈະຕ້ອງຮັບຮູ້ຜູ້ຊ່ວຍອີກ. ໃນໂຢຮັນ 15:26 ພະວິນຍານຊຶ່ງອອກຈາກ ພະບິດາຈະຊົງເປັນພະຍານໃຫ້ແກ່ໃຜ? _____________________

**6** ໃຫ້ອ່ານໂຢຮັນ 16:14

ກ. ພະວິນຍານຈະໃຫ້ໃຜຮັບກຽດ? ______________________________________

ຂ. ພະວິນຍານຈະເອົາສິ່ງທີ່ເປັນຂອງໃຜມາປະກາດ? ________________________

**7** ດັ່ງນັ້ນ ເຫັນວ່າພະວິນຍານບໍລິສຸດແຈ້ງໃຫ້ໂລກຮູ້ເລື່ອງຄວາມບາບ ທັງຮູ້ເລື່ອງພະຜູ້ຊ່ວຍໃຫ້ໄດ້ລອດຈາກບາບດ້ວຍ ຄືໃຜ? ________________________________________

**8** ຄຶດສະຕຽນເຮົາຮັບພາລະຈາກພະເຈົ້າໃນການປ່າວປະກາດດັ່ງຕໍ່ໄປນີ້: ພະເຢຊູສາມາດໃຫ້ເຂົາໄດ້ລອດ. ພະເຢຊູພ້ອມທີ່ຈະໃຫ້ເຂົາໄດ້ລອດໃນທັນທີນີ້. ມີແຕ່ພະເຢຊູອົງດຽວທີ່ຈະຊ່ວຍໃຫ້ລອດໄດ້. ຄຶດສະຕຽນເຮົາປະກາດຂ່າວປະເສີດໄດ້ ແຕ່ແມ່ນອົງໃດທີ່ຈະບັນດົນໃຫ້ເຂົາຮູ້ແຈ້ງໃນເລື່ອງນີ້? ________________________________________________

**9** ໃນຊ່ອງຫວ່າງຕໍ່ໄປນີ້ ໃຫ້ທ່ານຂຽນລາຊະກິດຂອງພະວິນຍານຕໍ່ຄົນທີ່ບໍ່ໄວ້ວາງໃຈໃນພະເຢຊູ.

ກ. ____________________________________________________________

ຂ. ____________________________________________________________

**10** ແຕ່ຍັງມີອີກ ໃຫ້ອ່ານ 1 ໂກລິນໂທ 12:3 ຜູ້ທີ່ວ່າ "ພະເຢຊູຊົງເປັນອົງພະຜູ້ເປັນເຈົ້າ" ກ່າວໂດຍອົງໃດ? ________________________________________________________

**11** ທີ່ຈະເວົ້າວ່າ ພະເຢຊູຊົງເປັນອົງພະຜູ້ເປັນເຈົ້າ ໝາຍຄວາມວ່າ ຈະຮັບຮູ້ວ່າພະເຢຊູເປັນເຈົ້າຂອງເຮົາ ຄືເຮົາຈະ ມອບຕົວແລະເຊື່ອຟັງຄວາມພະອົງ. ດັ່ງນັ້ນ ພະວິນຍານຂອງພະເຈົ້າຈະຊ່ວຍໃຫ້ຜູ້ທີ່ໄວ້ວາງໃຈໃນພະເຢຊູຢ່າງໃດ? (ເລືອກ)

ກ. ______ ຊ່ວຍໃຫ້ລືມພະເຢຊູ

ຂ. ______ ຊ່ວຍໃຫ້ຕໍ່ສູ້ພະເຢຊູ

ຄ. ______ ຊ່ວຍໃຫ້ເຊື່ອຟັງພະເຢຊູ

**12** ພະວິນຍານບໍລິສຸດ ຈະຊ່ວຍຄົນທີ່ມາຫາພະເຢຊູຢ່າງໃດ? ______________________

**13** ຄຳວ່າ "ພະຜູ້ເປັນເຈົ້າ" ອາດຈະເວົ້າໄດ້ງ່າຍ ແຕ່ທີ່ເຮົາຈະເອົາພະເຢຊູມາເປັນເຈົ້າໃນຊີວິດຂອງເຮົາກໍບໍ່ງ່າຍ. ແມ່ນໂດຍອຳນາດຂອງອົງໃດທີ່ເຮົາຈະຍອມໃຫ້ພະເຢຊູເປັນເຈົ້າໃນຊີວິດຂອງເຮົາ? ____________________________________________________

**14** ໂຢຮັນ 3:5-6 ແລະຂໍ້ 8 ອີກ ກ່າວເຖິງການປ່ຽນແປງໃນຊີວິດຂອງຄົນທີ່ໄວ້ວາງໃຈໃນພະເຢຊູມາແລ້ວ. ຄືການບັງເກີດມາຈາກໃຜ? ________________________________

ໃນວັນເວລາທີ່ເຮົາໄວ້ວາງໃຈໃນພະເຢຊູແລ້ວ ເຮົາໄດ້ບັງເກີດມາຈາກພະວິນຍານບໍລິສຸດ.

**15** ໃນເມື່ອເຮົາໄວ້ວາງໃຈໃນພະເຢຊູ ພະວິນຍານບໍລິສຸດມີສ່ວນຢ່າງໃດ? ______________

**16** ໃນວັນເວລາທີ່ເຮົາໄວ້ວາງໃຈໃນພະເຢຊູ ພະວິນຍານບໍລິສຸດກະທຳສອງຢ່າງ. (ຕື່ມຄວາມ)

ກ. ພະວິນຍານຊ່ວຍຜູ້ທີ່ເຊື່ອໃໝ່ໃຫ້ __________________________ ຄຳຂອງພະເຈົ້າ.

ຂ. ແລະຜູ້ທີ່ໄວ້ວາງໃຈກັບພະເຢຊູ ____________________ ໃໝ່ຈາກພະວິນຍານບໍລິສຸດ.

**17** ລາຊະກິດຂອງພະວິນຍານຕໍ່ເຮົາ 9 ປະການ ເຮົາຮຽນເລື່ອງ 4 ປະການມາແລ້ວ.

ກ. ຝ່າຍຄົນທີ່ບໍ່ທັນເຊື່ອ ພະວິນຍານກະທຳສອງຢ່າງໃດ?

_____________________________ _______________________________

ຂ. ໃນວັນເວລາທີ່ເຮົາເຊື່ອມາແລ້ວ ພະວິນຍານກະທຳສອງຢ່າງໃດ?

_____________________________ _______________________________

**18** (ຕື່ມຄວາມທີ່ຂາດ) ເຖິງເຮົາຈະປະກາດຂ່າວປະເສີດໃຫ້ຜູ້ອື່ນຟັງກໍຕາມ ແຕ່ນອກຈາກພະວິນຍານຈະໃຫ້ເຮົາຮັບຮູ້ ເລື່ອງ _________ ແລະ ເປັນພະຍານແກ່ ___________ ຈະບໍ່ມີປະໂຫຍດ. ມີແຕ່ພະວິນຍານທີ່ຈະດົນໃຈເຂົາໃຫ້ເຊື່ອ__ __________ ຂອງ ພະເຢຊູ ແລະ ___________ ໃໝ່ໄດ້.

**19** ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານໝາຍ √ ຂ້າງຂໍ້ທີ່ສຳຄັນທີ່ສຸດໃນການປ່າວປະກາດຂ່າວປະເສີດ. (ເອົາແຕ່ຂໍ້ດຽວ)

ກ. _______ ນັກເທດທີ່ເກັ່ງ
ຂ. _______ ການບົວລະບັດ
ຄ. _______ ຄຳພະຍານເຮົາ
ງ. _______ ການຂອງພະວິນຍານ



| |
|---|
| ໃຫ້ທ່ານຂຽນຄຳ "ຕໍ່ຄົນທີ່ບໍ່ເຊື່ອ" ໃນພະຄຳພີຂ້າງໂຢຮັນ 16:8 ແລະໂຢຮັນ 15:26 ແລະ ຂຽນຄຳ "ເມື່ອວັນເວລາທີ່ເຊື່ອ" ຂ້າງ 1 ໂກລິນໂທ 12:3 ແລະ ໂຢຮັນ 3:5-6 |

**20** ເຮົາຮຽນເລື່ອງລາຊະກິດຂອງພະວິນຍານ 4 ປະການມາແລ້ວ.
ຍັງເຫຼືອຈັກປະການທີ່ຈະຮຽນ?__________________________________________

**21** ຕໍ່ໄປນີ້ເຮົາຮຽນເລື່ອງພາລະຂອງພະວິນຍານໃນການສ້າງຄວາມສຳພັນລະຫວ່າງເຮົາກັບພະເຈົ້າ. ໃຫ້ອ່ານ ໂລມ 8:15-16.
ກ. ພະວິນຍານຮ່ວມເປັນພະຍານກັບວິນຍານຂອງພວກເຮົາວ່າ ເຮົາເປັນບຸດຂອງໃຜ? _____
ຂ. ຄືພະວິນຍານໃຫ້ເຮົາແນ່ໃຈວ່າມີຄວາມສຳພັນຢ່າງໝັ້ນຄົງກັບໃຜ? ______________

**22** ທີ່ພະວິນຍານເປັນພະຍານກັບເຮົາວ່າເປັນລູກຂອງພະເຈົ້າສະແດງວ່າ ພະວິນຍານໃຫ້ເຮົາໝັ້ນໃຈໃນຄວາມລອດພົ້ນ. ແມ່ນອີງໃດໃຫ້ເຮົາໝັ້ນໃຈໃນຄວາມລອດພົ້ນ? _____________

**23** ໃນໂລມ 8:15 ຄຳວ່າ "ອັບບາ" ແປວ່າຫຍັງ? ________________________________

**24** ທີ່ຈິງຄຳວ່າ "ອັບບາ" ນັ້ນເປັນຄວາມສາມັນທີ່ເດັກນ້ອຍຈະເວົ້າກັບພໍ່. ບໍ່ແມ່ນສັບສູງຈັກດີ້! ທີ່ຈະໃຊ້ຄຳ "ອັບບາ" ນັ້ນມີເນື້ອຄວາມຢ່າງໃດ? (ເລືອກ)

ກ. _______ ພະເຈົ້າເປັນອີງທີ່ເງັ້ມງວດຫຼາຍ

ຂ. _______ ພະເຈົ້າຮັກເຮົາແລະຢູ່ໃກ້ສິດກັບເຮົາ

ຄ. _______ ມີແຕ່ພະວິນຍານທີ່ຢູ່ໃກ້ສິດກັບພະບິດາ

ງ. _______ ພະເຈົ້າມີຕຳແໜ່ງສູງຈຶ່ງບໍ່ກ່ຽວຂ້ອງກັບມະນຸດ

**25** (ໃຫ້ຕື່ມຄວາມທີ່ຂາດຕໍ່ໄປນີ້) ພະວິນຍານບໍລິສຸດເປັນພະຍານກັບວິນຍານຂອງເຮົາວ່າ ເຮົາເປັນ ________ ຂອງພະເຈົ້າ ຄືພະເຈົ້າເປັນ _________ ຂອງເຮົາ. ໝາຍຄວາມວ່າ ພະວິນຍານໃຫ້ເຮົາ __________ ວ່າເຮົາໄດ້ລອດພົ້ນ.

**26** ໃນບົດທີ 7 ນັ້ນ ເຮົາໄດ້ຮຽນເລື່ອງສັນຍາລັກຕ່າງໆ ຂອງພະວິນຍານ. ແມ່ນສັນຍາລັກໃດທີ່ສະແດງວ່າເຮົາຢູ່ຢ່າງ ປອດໄພໃນຄອບຄົວຂອງພະເຈົ້າ? ___________________________

**27** ພະວິນຍານສ້າງຄວາມສຳພັນລະຫວ່າງເຮົາກັບພະເຈົ້າໂດຍການໃຫ້ເຮົາໝັ້ນໃຈໃນຫຍັງ?

_________________________________________________________________

**28** ໃຫ້ອ່ານ ໂລມ 8:26-27 ໃນຂໍ້ພະຄຳພີນັ້ນ ພະວິນຍານຊ່ວຍເຮົາຢ່າງໃດ? (ເລືອກ ຂໍ້ດຽວ)

ກ. _______ ທຳໃຫ້ເຮົາເປັນຄົນບໍລິສຸດ

ຂ. _______ ໃຫ້ເຮົາໝັ້ນໃຈໃນຄວາມລອດ

ຄ. _______ ເມື່ອເຮົາບໍ່ຮູ້ຂໍຈາກພະເຈົ້າ ພະວິນຍານຂໍແທນ

ງ. _______ ພະອົງຂອບໃຈ

**29** ພະວິນຍານຂອງພະເຈົ້າອ້ອນວອນແທນເຮົາຈຶ່ງທຳໃຫ້ຄຳອ້ອນວອນນັ້ນຖືກຕ້ອງຕາມນ້ຳພະໄທໃຜ? _______________________________________________________

**30** ພະວິນຍານບໍລິສຸດຊ່ວຍສ້າງຄວາມສຳພັນລະຫວ່າງເຮົາກັບພະເຈົ້າໃນສອງດ້ານຄື: (ຕື່ມຄວາມທີ່ຂາດ)

ກ. ໃຫ້ເຮົາ _________ ໃຈໃນຄວາມ ____________ .

ຂ. ຊ່ວຍໃຫ້ຄຳ ___________ ຂອງເຮົາຖືກຕາມ ______________ ຂອງ __________ .

**31** ບັດນີ້ ເຮົາຈະຮຽນຄືນເລື່ອງລາຊະກິດຂອງພະວິນຍານ 6 ປະການທີ່ເຮົາຮຽນມາໃນບົດນີ້ແລ້ວ.

ກ. ຕໍ່ຄົນທີ່ບໍ່ໄວ້ວາງໃຈໃນພະເຢຊູເທື່ອ

______________________________ ________________________________

ຂ. ທີ່ພະວິນຍານກະທຳໃນວັນເວລາທີ່ເຮົາເຊື່ອໃນພະເຢຊູ.

______________________________ ________________________________

ຄ. ທີ່ພະວິນຍານກະທຳເພື່ອສ້າງຄວາມສຳພັນລະຫວ່າງເຮົາກັບພະເຈົ້າ

_______________ _______________

**32** ຍັງມີລາຊະກິດສອງປະການທີ່ພະວິນຍານດັດແປງຊີວິດຂອງຄຼິດສະຕຽນເຮົາ. ໃຫ້ອ່ານ ໂລມ 8:13 ໃນຂໍ້ພະຄຳພີນັ້ນ ອາຈານໂປໂລບອກວ່າ ເຮົາຈະໄດ້ທຳລາຍການຂອງຝ່າຍເນື້ອກາຍໂດຍລິດໃດ? _______________

**33** ຄຳວ່າ "ການຂອງຝ່າຍເນື້ອກາຍ" ໝາຍເຖິງການກະທຳບາບ, ໂດຍລິດຂອງພະວິນຍານເຮົາຈະໄດ້ເຮັດຫຍັງກັບ ເນື້ອກາຍນັ້ນ? _______________

**34** ການກະທຳຂອງຝ່າຍເນື້ອກາຍຄືກັບຫຍັງຕໍ່ໄປນີ້. (ເລືອກ 3 ປະການ)

ກ. _______ ຕໍ່ສູ້ຄວາມຊົ່ວ

ຂ. _______ ຕໍ່ຕ້ານການອະທຳ

ຄ. _______ ສຶກສາຮຽນຮູ້ໃນເລື່ອງຄວາມຜິດ

ງ. _______ ເຮັດບາບບໍ່ຫຼາຍ

ຈ. _______ ຫຼີກເວັ້ນຈາກສິ່ງທີ່ທົດລອງເຮົາ

**35** ຖ້າເຮົາຕົກບາບແລ້ວ ແຕ່ຍັງຕັ້ງໃຈວ່າຈະທຳລາຍການຂອງຝ່າຍເນື້ອກາຍ ເຮົາຈະເຮັດຢ່າງໃດຕໍ່ໄປ? (ເລືອກ)

ກ. _______ ແກ້ຕົວວ່າ ທຸກຄົນເຮັດບາບຢູ່

ຂ. _______ ຕຶກຕອງເບິ່ງສາເຫດທີ່ຕົກໃນບາບ

ຄ. _______ ຮັບສາລະພາບບາບນັ້ນຕໍ່ພະເຈົ້າ ແລະ ອາໄສລິດພະວິນຍານຕໍ່ໄປ.



**36** ຖ້າເຮົາຈະສາລະພາບບາບແລະຖິ້ມໃຈເກົ່າເອົາໃຈໃໝ່ ເຮົາຕ້ອງມີອົງໃດມາຊ່ວຍກ່ອນ?

_______________

**37** ໃຫ້ອ່ານ ໂລມ 8:13 ອີກເທື່ອໜຶ່ງ. ພະວິນຍານຈະຊ່ວຍໃນການທຳລາຍຝ່າຍເນື້ອກາຍໄດ້ຢ່າງໃດ? (ເລືອກ)

ກ. _______ ແຕ່ສະເພາະໃນເວລາເຮົາບັງເກີດໃໝ່

ຂ. _______ ເຖິງວ່າເຮົາຈະຂັດຂວາງຕໍ່ຕ້ານ

ຄ. _______ ເຮົາຕ້ອງຮ່ວມມືກັນກັບພະອົງ

ງ. _______ ເປັນການຂອງພະວິນຍານອົງດຽວ

**38** ບໍ່ແມ່ນແຕ່ພະວິນຍານຈະທຳລາຍການຝ່າຍເນື້ອກາຍໂດຍທີ່ເຮົາບໍ່ຮູ້ເລື່ອງ. ແມ່ນແຕ່ພວກເຮົາຕັ້ງໃຈວ່າຈະທຳລາຍ ແລະພະວິນຍານຊົງໂຜດຊ່ວຍ. ໃຫ້ເຮົາຈົດລາຊະກິດຂອງພະວິນຍານໃນການດັດແປງຊີວິດຂອງຄຼິດສະຕຽນປະການ ທຳອິດ. _______________

_______________

**39** ໃຫ້ອ່ານ ຄາລາເຕຍ 5:22-23 ທີ່ຍົກຜົນມາເປັນຕົວຢ່າງລາຊະກິດຂອງພະວິນຍານ. ຜົນທີ່ປາກົດມາໃນຊີວິດ ຄຣິດສະຕຽນຄືຜົນຂອງອົງໃດ? ______________________________

**40** ຜົນນັ້ນບໍ່ແມ່ນສິ່ງທີ່ຈະປາກົດມາຈາກເຮົາເອງ ແຕ່ເປັນຜົນຂອງພະວິນຍານທີ່ຜະລິດອອກມາໃນຊີວິດຄຣິດສະຕຽນໄດ້. ຜົນຂອງພະວິນຍານໃນຊີວິດຂອງເຮົາຄື ລາຊະກິດທີສອງໃນການດັດແປງຊີວິດເຮົາ. ໃຫ້ທ່ານຈົດລາຊະກິດຂອງພະວິນຍານໃນການດັດແປງຊີວິດຂອງຄຣິດສະຕຽນເຮົາທັງສອງປະການ:______________________________________________

ໃຫ້ມີ ____________ ຂອງ ___________________ ໃນຊີວິດຂອງເຮົາ. (ຕື່ມຄວາມຂາດ)

**41** ພະວິນຍານໂຜດໃຫ້ມີຫຍັງໃນຊີວິດຂອງຄຣິດສະຕຽນ? __________________________

**42** ໃຫ້ທ່ານໝາຍ √ ຂ້າງປະການໃດທີ່ເປັນຜົນຂອງພະວິນຍານ.

ກ. ______ ຄວາມຮ້າຍ
ຂ. ______ ຄວາມຮັກ
ຄ. ______ ຄວາມອົດກັ້ນໄວ້ນານ
ງ. _______ ຄວາມດີ
ຈ. _______ ໃຈຊົມຊື່ນ
ສ. _______ ຄວາມຜິດສິນທຳ
ຊ. _______ ຄວາມຍິນດີ
ຍ. _______ ຄວາມປານີ
ດ. _______ ຄວາມສັດຊື່



**43** ກ. ພະວິນຍານດັດແປງອຸປະນິໄສໂດຍທຳລາຍຫຍັງ? __________________________
ຂ. ແລະໂດຍໃຫ້ເກີດມີຫຍັງໃນຊີວິດ? ____________________________________

**44** ກ. ເພື່ອຈະດັດແປງນິໄສຂອງເຮົາ ພະວິນຍານກະທຳຫຍັງກັບການຂອງຝ່າຍເນື້ອກາຍ? ___
ຂ. ພະວິນຍານເຮັດໃຫ້ມີຜົນຂອງພະວິນຍານປາກົດມາໃນບ່ອນໃດ? ________________

> ໃຫ້ຂຽນຄຳ "ເພື່ອສ້າງຄວາມສຳພັນກັບພະເຈົ້າ" ໃສ່ຂອບໜ້າພະຄຳພີ ຂ້າງໂລມ 8:15-16 ແລະ ໂລມ 8:26-27. ແລ້ວຂຽນຄຳ "ດັດແປງນິໄສ" ຂ້າງໂລມ 8:13 ແລະ ຄາລາເຕຍ 5:22-23

**45** ເພື່ອສະຫລູບເລື່ອງທີ່ເຮົາຮຽນມາໃນບົດທີ 8 ນີ້ ໃຫ້ທ່ານຂຽນ ລາຊະກິດຂອງພະວິນຍານທັງ 8 ປະການຕໍ່ໄປນີ້:

ກ. ຕໍ່ຄົນທີ່ບໍ່ໄວ້ວາງໃຈກັບພະເຢຊູເທື່ອ.

______________________________ ________________________________

ຂ. ທີ່ພະວິນຍານກະທຳໃນວັນເວລາທີ່ເຮົາໄວ້ວາງໃຈໃນພະເຢຊູ.

______________________________ ________________________________

ຄ. ທີ່ພະວິນຍານກະທຳເພື່ອສ້າງຄວາມສຳພັນລະຫວ່າງເຮົາກັບພະເຈົ້າ.

______________________________ ________________________________

ງ. ເພື່ອດັດແປງອຸປະນິໄສຂອງຊີວິດສະຕຽນໃຫ້ໃໝ່

_____________________________ _____________________________

**46** ເຮົາຮຽນມາເລື່ອງລາຊະກິດຂອງພະວິນຍານ 8 ປະການມາແລ້ວ. ຍັງເຫຼືອຢູ່ຈັກປະການໃນບົດຮຽນນີ້? _____________________________

**47** ລາຊະກິດປະການສຸດທ້າຍນີ້ ບໍ່ໄດ້ກ່ຽວເລື່ອງຄົນ ແຕ່ກ່ຽວເລື່ອງພະຄໍາພີ. ໃຫ້ອ່ານ 2 ເປໂຕ 1:20-21

ກ. ຂໍ້ 20 ຍົກເລື່ອງການຕີຄວາມໝາຍຂອງຄໍາທໍານວາຍໃດ? _______________

ຂ. ຄໍານັ້ນມາຈາກໃສ? _____________________________

ຄ. ໃຜຊົງດົນໃຈຜູ້ກ່າວ? _____________________________

ງ. ມະນຸດມີສ່ວນໃດ? _____________________________

**48** ດັ່ງນັ້ນ ແມ່ນໃຜດົນໃຈມະນຸດໃຫ້ກ່າວ? _____________________________

*ຄໍາທີ່ແປວ່າ "ດົນໃຈ" ນັ້ນມີເນື້ອຄວາມວ່າສິ່ງທີ່ເຄື່ອນໄຫວໂດຍລົມພັດໄປ. ພວກເຮົາເຫັນລົມບໍ່ໄດ້ ເຫັນແຕ່ສິ່ງ ທີ່ພັດໄປພັດມາ. ເຊັ່ນດຽວກັນ ພວກເຮົາບໍ່ເຫັນພະວິນຍານກັບຕາຈັກເທື່ອ ແຕ່ເຮົາເຫັນການຂອງເພິ່ນ.*

**49** ທີ່ພະວິນຍານຂອງພະເຈົ້າດົນໃຈຜູ້ກ່າວນັ້ນ ຖືກກັບສັນຍາລັກໃດທີ່ທ່ານຮຽນມາໃນບົດທີ 7 ນັ້ນ? (ເລືອກ)

ກ. _______ ລົມ

ຂ. _______ ໄຟ

ຄ. _______ ນໍ້າ

ງ. _______ ຕາປະທັບ

**50** ລາຊະກິດຂອງພະວິນຍານຝ່າຍພະຄໍາພີຄືຫຍັງ? (ເລືອກຂໍ້ດຽວ)

ກ. _______ ພະວິນຍານດົນໃຈຜູ້ກ່າວ

ຂ. _______ ພະວິນຍານຕີຄວາມໝາຍ

ຄ. _______ ພະວິນຍານປະດິດພະຄໍາພີຂຶ້ນ

**51** ໃຫ້ອ່ານ 2 ຕີໂມທຽວ 3:16 ທີ່ວ່າດັ່ງຕໍ່ໄປນີ້: ພະຄໍາພີທຸກຕອນໄດ້ຮັບການຊົງ _________ ຈາກພະເຈົ້າ. (ຕື່ມຄວາມທີ່ຂາດ)

**52** ໃນບົດທີ 8 ນີ້ ເຮົາຮຽນມາເລື່ອງລາຊະກິດຂອງພະວິນຍານ 9 ປະການ. ໃນບົດທີ 7 ນັ້ນ ເຮົາຮຽນເລື່ອງ 8 ປະການທີ່ສະແດງວ່າ ພະວິນຍານບໍລິສຸດເປັນບຸກຄະລິກພາບ. ໃຫ້ທ່ານຍົກ 5 ປະການນັ້ນມາຂຽນລົງ.

_____________________________ _____________________________

_____________________________ _____________________________

_____________________________

**ຄຳຕອບ:**

**1** ກ. ພະເຈົ້າ ຂ. ບຸກຄະລິກ ຄ. ໄຟ ງ. ນ້ຳ ຈ. ລົມ
ສ. ຕາປະທັບ

**2** ໂລກ

**3** ພະວິນຍານບໍລິສຸດ

**4** ເລື່ອງບາບ

**5** ເຮົາ (ພະເຍຊູເປັນຜູ້ປາກ)

**6** ກ. ເຮົາ (ພະເຍຊູປາກ) ຂ. ເຮົາ(ພະເຍຊູປາກ)

**7** ພະເຍຊູ

**8** ພະວິນຍານບໍລິສຸດ

**9** ກ. ໃຫ້ຮູ້ແຈ້ງໃນເລື່ອງຄວາມບາບ
ຂ. ຈະເປັນພະຍານໃຫ້ແກ່ພະເຍຊູ (ຄຳຄ້າຍຄືກັນກໍໄດ້)

**10** ພະວິນຍານບໍລິສຸດ

**11** ຄ ຖືກ

**12** ຊ່ວຍໃຫ້ເຊື່ອຟັງຄວາມຂອງພະເຍຊູ

**13** ພະວິນຍານບໍລິສຸດ

**14** ພະວິນຍານ

**15** ເຮັດໃຫ້ເຮົາບັງເກີດໃໝ່

**16** ກ. ຟັງ ຂ. ບັງເກີດ

**17** ກ. ໃຫ້ຮັບຮູ້ເລື່ອງບາບ ເປັນພະຍານໃຫ້ແກ່ພະເຍຊູ
ຂ. ຊ່ວຍໃຫ້ຟັງຄຳຂອງພະເຈົ້າ ໃຫ້ບັງເກີດໃໝ່

**18** ບາບ... ພະເຍຊູ... ຟັງຄວາມ... ບັງເກີດ

**19** ງ ຖືກ

**20** 5 ປະການ

**21** ກ. ພະເຈົ້າ ຂ. ກັບພະເຈົ້າ

**22** ພະວິນຍານ

**23** ບິດາ

**24** ຂ ຖືກ

**25** ບຸດ... ບິດາ... ໝັ້ນໃຈ

**26** ຕາປະທັບ

**27** ຄວາມລອດພົ້ນ

**28** ຄ ຖືກ

**29** ຂອງພະເຈົ້າ

**ຄຳຕອບ (ຕໍ່):**

**30** *ກ. ໝັ້ນ... ລອດພົ້ນ ຂ. ອ້ອນວອນ... ນ້ຳພະໄທ... ພະເຈົ້າ*

**31** *ກ. ໃຫ້ຮັບຮູ້ເລື່ອງບາບ ເປັນພະຍານໃຫ້ແກ່ພະເຍຊູ*
*ຂ. ຊ່ວຍໃຫ້ຟັງຄຳຂອງພະເຈົ້າ ໃຫ້ບັງເກີດໃໝ່*
*ຄ. ໃຫ້ເຮົາໝັ້ນໃຈໃນຄວາມລອດພົ້ນ ໃຫ້ຄຳອ້ອນວອນຖືກຕາມນ້ຳພະໄທ*

**32** *ລິດພະວິນຍານ*

**33** *ທຳລາຍ*

**34** *ກ ຂ ຈ ຖືກ*

**35** *ຄ ຖືກ*

**36** *ພະວິນຍານບໍລິສຸດ*

**37** *ຄ ຖືກ*

**38** *ພະອົງຊ່ວຍທຳລາຍການຂອງຝ່າຍເນື້ອກາຍ*

**39** *ພະວິນຍານ*

**40** *ຊ່ວຍທຳລາຍການຂອງຝ່າຍເນື້ອກາຍ ຜົນ... ພະວິນຍານ*

**41** *ຜົນຂອງພະວິນຍານ*

**42** *ຂ ຄ ງ ຊ ຍ ດ ຖືກ*

**43** *ກ. ການຂອງຝ່າຍເນື້ອກາຍ ຂ. ຜົນຂອງພະວິນຍານ*

**44** *ກ. ທຳລາຍ ຂ. ໃນຊີວິດຂອງຄຣິດສະຕຽນ*

**45** *ກ. ໃຫ້ຮັບຮູ້ເລື່ອງບາບ ເປັນພະຍານໃຫ້ແກ່ພະເຍຊູ*
*ຂ. ຊ່ວຍໃຫ້ຟັງຄຳຂອງພະເຈົ້າ ໃຫ້ບັງເກີດໃໝ່*
*ຄ. ໃຫ້ເຮົາໝັ້ນໃຈໃນຄວາມລອດພົ້ນ ໃຫ້ຄຳອ້ອນວອນຂອງເຮົາຖືກຕາມນ້ຳພະໄທ*
*ງ. ຊ່ວຍທຳລາຍການຂອງຝ່າຍເນື້ອກາຍ ໃຫ້ມີຜົນຂອງພະວິນຍານ*

**46** *ປະການດຽວ*

**47** *ກ. ໃນພະຄຳພີ ຂ. ພະເຈົ້າ ຄ. ພະວິນຍານ ງ. ມະນຸດໄດ້ກ່າວ*

**48** *ພະວິນຍານ*

**49** *ກ ຖືກ*

**50** *ກ ຖືກ*

**51** *ບັນດົນໃຈ*

**52** *(ເອົາ 5 ປະການຈາກ 8 ປະການໃນຄຳຖາມ 7.11)*